ກໍາລັງທັບເສຣີປະຊາທິປະໄຕລາວ
Lao Liberal Democratic Movement & Freedom Fighters
Central Representative P. O. Box 189486. 2121 Broadway St. Sacramento, CA. 95818. U.S.A.
P.O Box 189486. 2121 Broadway St. Sacramento. CA 95818 U.S.A.
www.laofreedom.com

**ສູນກາງຕາງໜ້າ**

**ພັກ ແລະກໍາລັງທັບເສຣີປະຊາທິປະໄຕລາວ.**

*** ຫ້ອງການ ປະທານພັກເສຣີປະຊາທິປະໄຕລາວ.**

**ເລກທີ ໔໗໔/ປພຖຊ/໐໔໑໙໑໐**

# ບົດຄວາມ

## ພັກຣັດ ພັທນາ ທາງປີ້ນ.

ການທີ່ປະເທດຊາດ ຍັງຕົກຢູ່ໃນຄວາມຍາກຈົນ ລ້າຫລັງ, ປະຊາຊົນ ຍັງໄດ້ຮັບຄວາມເດືອດຮ້ອນ ຄືດັ່ງເຫັນກັນ ຢູ່ໃນປະຈຸບັນນີ້, **ກໍຍ້ອນພັກຣັດ ພັທນາປະເທດ ທາງປີ້ນ** ນັ້ນເອງ!. ແທນທີ່ຈະພັທນາການເມືອງ, ປົດປ່ອຍ ໃຫ້ປະຊາຊົນ ໄດ້ມີອິສຣະພາບ, ຊໍ້າພັດຫັນໄປພັທນາ ເສຖກິດສັງຄົມ,ຊຶ່ງມັນບໍ່ໄດ້ນໍາຜົນດີ ມາສູ່ຊາດສູ່ປະຊາຊົນເທົ່າທີ່ຄວນ ແທນທີ່ຈະພັທນາຄົນໃນຊາດຂອງຕົນ ໃຫ້ເຂົ້າໃຈເຖິງຣະບົບການຄ້າເສຣີ, ພັທນາເຍົາວະຊົນ ໃຫ້ໄດ້ຮັບການສຶກສາຮໍ່າຮຽນ, ມີຄວາມຮູ້ທາງດ້ານວິຊາການ, ດ້ານຈັດການບໍຣິຫານຕ່າງໆ ໃຫ້ພວກເຂົາ ເປັນຄົນທີ່ມີຄວາມສາມາດ ອອກເຮັດງານ ໄດ້ຕາມມາຕຖານສາກົນ. ພັກຣັດ, ຄວນພັທນາຄົນໃນຊາດຂອງຕົນ ໃຫ້ຮັບຮູ້ວັທນະທັມໃໝ່... ຄືປ່ຽນຈາກ ການຊ່ວຍເຫລືອຊຶ່ງກັນແລະກັນໃນສິ່ງທີ່ຕົນມີ ມາເປັນການແລກປ່ຽນ ຫລື ການຄ້າຂາຍ ທີ່ຕ້ອງໄປດ້ວຍຄຸນທັມ, ບໍ່ເອົາປຽບທັງຜູ້ຊື້ແລະຜູ້ຂາຍ ຈຶ່ງຈະເຮັດໃຫ້ປະຊາຊົນລາວ ໄປທັນກັບການຄ້າເສຣີໄດ້.

**ພັກຣັດ ຊໍ້າພັດບໍ່ໄດ້ເອົາໃຈໃສ່ ເທົ່າທີ່ຄວນ, ຫັນໄປສົ່ງເສີມ ແລະ ພັທນາ ໃນສິ່ງທີ່ຊາດລາວ ຄົນລາວຍັງບໍ່ທັນຕຽມພ້ອມ ທີ່ຈະເປັນເຈົ້າການ ໃນສິ່ງຕ່າງໆເຫລົ່ານັ້ນ, ສນັ້ນ, ການພັທນາທາງປີ້ນນີ້ ຈຶ່ງນໍາຜົນເສັຽຫາຍມາໃຫ້ ແກ່ຊາດແລະປະຊາຊົນ ຢ່າງໃຫຍ່ຫລວງທີ່ສຸດ!.**

ການຮຽກຮ້ອງ ໃຫ້ບໍຣິສັທຕ່າງຊາດ ເຂົ້າມາຂຸດຄົ້ນບໍ່ແຮ່ໂລຫະ, ສ້າງເຂື່ອນໄຟຟ້າ, ສໍາປະທານທີ່ດິນປູກຝັງ, ສ້າງເສຖກິດພິເສດ, ສ້າງສນາມກ໋ອບ, ສ້າງເມືອງຈີນທຸຣະກິດຢູ່ບຶງທາດຫລວງ ແລະການລົງທຶນ

ຂອງຕ່າງຊາດ ນັບວັນນັບຫລາຍຂຶ້ນ ເປັນຕົ້ນ: ໃນປີ 2006 ມີ 319 ລ້ານດອນລາສະຫະຣັດ. ປີ 2007, ເພີ້ມຂຶ້ນເຖິງ 785 ລ້ານດອນລາສະຫະຣັດແລະປີ 2008 ມີເຖິງ 854 ລ້ານດອນລາສະຫະຣັດ ລ້ວນແລ້ວແຕ່ສ້າງຄວາມລ້ຳລວຍ ໃຫ້ແກ່ບໍຣິສັທຕ່າງຊາດແລະຄນະພັກຣັດຜູ້ມີອຳນາດ ອິດທິພົນ... ແຕ່ຕຣົງກັນຂ້າມ, ມັນໄດ້ສ້າງຄວາມຈິບຫາຍ ດັບວາຍ ໃຫ້ແກ່ຊັພຍາກອນທັມຊາດ, ທຳລາຍສະພາບແວດລ້ອມ ນຳເອົາຄວາມເດືອດຮ້ອນ ແລະໜີ້ສິນ ມາສູ່ຊາດ ແລະປະຊາຊົນ ນັບວັນນັບຫລາຍຂຶ້ນ.

ມັນເປັນການ ພັທນາປະເທດ ທີ່ໜ້າສັງເວດເຫລືອທີ່ສຸດ!, ປະຊາຊົນ ບໍ່ມີວັນຈະຫາຄວາມສຸຂໄດ້. ໃນຊ່ວງ ປີ 1975-85 ພັກຣັດ ປະຕິບັດ ນະໂຍບາຍຄອມມີວນິສ ເຕັມຮູບແບບ, ອັດປະຕູປະເທດ ສ້າງສັງຄົມນິຍົມ ໂດຍບໍ່ຜ່ານທຶນນິຍົມ. ປະຊາຊົນ ຖືກບັງຄັບ ໃຫ້ເຮັດນາລວມ, ໃຫ້ເຮັດສະຫະກອນ, ໃຫ້ຢູ່ກິນລວມໝູ່ສັງຄົມນິຍົມ... ປະເທດຊາດໄປບໍ່ໄດ້, ປະຊາຊົນ ເກີດຄວາມເດືອດຮ້ອນ ອຶລະຫິນ ອຶດຢາກ ລົ້ມຕາຍຢ່າງຫລວງຫລາຍ, ພັກຣັດ ຈິ່ງຫັນມາໃຊ້ ຈິຕນາການໃໝ່ ເລີ້ມແຕ່ປີ 1986 ເປັນຕົ້ນມາ ຕາມແນ່ບົດ **"ການເມືອງ ຄອມມີວນິສ ເສຖກິດເສຣີ"** ປະຊາຊົນ ກໍຍິ່ງເດືອດຮ້ອນ ເປັນສອງເທົ່າຕົວ ຄື: 1. ປະຊາຊົນ ຍັງບໍ່ທັນ ຖືກປົດປ່ອຍ ໃຫ້ມີອິສຣະພາບ ແລະ 2. ປະຊາຊົນ ບໍ່ມີຄວາມຮູ້ ຄວາມສາມາດ ໃນການຜລິດ ສິ່ງໃດສິ່ງນຶ່ງເພື່ອເຮັດການຄ້າ ໃຫ້ເປັນອາຊີພ ຖືກຕາມກົນໄກ ຂອງຕລາດການຄ້າເສຣີນັ້ນໄດ້. ສັ້ນ, ປະຊາຊົນລາວ ປະມານ 80% ທີ່ເປັນຊາວນາ ຫາກິນ ແບບປະຖົມປະຖານ ຢູ່ຕາມທັມຊາດ ຈິ່ງເປັນຜູ້ທຸກຍາກ ຂາດເຂີນເຫລືອທີ່ສຸດ, ມີຣາຍໄດ້ ສເລັ່ຽ ບໍ່ເຖິງ 2 ດອນລາສະຫະຣັດ ຕໍ່ວັນ.

ພວກເຮົາປະຊາຊົນພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ ກໍຄື ປະຊາຊົນລາວທັງຊາດ, ຮຽກຮ້ອງມາຍັງ ພັກຣັດ ຈົ່ງໄດ້ຢຸດຕິ **ການພັທນາທາງປີ້ນນີ້ອີກຕໍ່ໄປ**, ເພາະມັນໄດ້ນຳ ຄວາມເສັຽຫາຍ ມາສູ່ຊາດ ແລະປະຊາຊົນ ຢ່າງໃຫຍ່ຫລວງ; ກຽດສັງສີຂອງຊາດ ແມ່ນບໍ່ມີເລີຍ. ຖືກອົງການຈັດຕັ້ງສາກົນ ກ່າວປະນາມ ວ່າ **"ເປັນຣັຖບານ ທີ່ ລະເມີດຕໍ່ສິດທິມະນຸດ ຢ່າງຮ້າຍແຮງ ເປັນຣັຖບານ ສໍ້ຣາດ ບັງຫລວງ, ຄ້າມະນຸດ, ຄ້າຢາເສບຕິດ, ຄ້າໄມ້ເຖື່ອນ, ທຳລາຍສະພາບແວດລ້ອມ ແລະບໍ່ເອົາໃຈໃສ່ ແກ້ໄຂເຍົາວະຊົນ ທີ່ມີບັນຫາ"**. ພາບພົດຕ່າງໆ ທີ່ກ່າວມານີ້, ມັນທຳໃຫ້ ພວກລູກຫລານ ທັງຢູ່ໃນ ແລະນອກປະເທດ ຮູ້ສຶກອັບອາຍຂາຍໜ້າ ຕໍ່ຊາວໂລກແລະຜິດຫວັງ ໃນນ້ຳໃຈຮັກຊາດ ຮັກປະຊາຊົນ ແບບ ປາກ້ວນ ພອກກິນລູກຕົນເອງ ຂອງພັກຣັດສຸດຂນາດ.

**ສູນກາງຕາງໜ້າ**

**ພັກ ແລະກຳລັງທັບເສຣີປະຊາທິປະໄຕລາວ**

**ກອງວິຈັຍ**

**ວັນທີ ໑໘ ກຸມພາ ໒໐໑໐.**